**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ**

---

ເຈົ້າແຂວງສາລະວັນ

ເລກທີ 07 /ຈຂ.ສວ

ສາລະວັນ,ວັນທີ 23 OCT 2014

## ຄຳສັ່ງແນະນຳ

**ເຖິງ:** ຄະນະຮັບຜິດຊອບຂັ້ນແຂວງ,ຫົວໜ້າພະແນກກະສິກຳ-ປ່າໄມ້,ຫົວໜ້າພະແນກອຸດສະຫະກຳ-ການຄ້າ,ຫົວໜ້າພະແນກການເງິນ,ຫົວໜ້າພະແນກພະລັງງານ-ບໍ່ແຮ່,ຫົວໜ້າພະແນກຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມແລະເຈົ້າເມືອງ 8ຕົວເມືອງ.

**ເລື່ອງ:** ແກ້ໄຂສະພາບການພົ້ນເດັ່ນກ່ຽວກັບທຸລະກິດໄມ້ຢູ່ແຂວງສາລະວັນ.

-ອີງຕາມ:ແຈ້ງການຂອງຫ້ອງການລັດຖະບານສະບັບເລກທີ 1434/ຫລບ,ລົງວັນທີ15 ຕຸລາ2014.

ປະຕິບັດຕາມການປຶກສາຫາລືຮ່ວມກັນກັບບັນດາທ່ານລັດຖະມົນຕີຊ່ວຍການຂອງກະຊວງຕ່າງໆແລະການນຳຂອງແຂວງສາລະວັນໃນຄັ້ງວັນທີ 20 ຕຸລາ 2014.

### ເຈົ້າແຂວງໆສາລະວັນຈຶ່ງອອກຄຳສັ່ງແນະນຳດັ່ງນີ້:

1).ໃຫ້ຄະນະຮັບຜິດຊອບຂັ້ນແຂວງ,ຫົວໜ້າພະແນກທີ່ກ່ຽວຂ້ອງຂອງແຂວງ ແລະ ເຈົ້າເມືອງສືບຕໍ່ປະຕິບັດຜົນການເຮັດທົດລອງຄຳສັ່ງ52/ນຍ ຢູ່ແຂວງສາລະວັນໃຫ້ສຳເລັດໂດຍໄວສຳລັບໄມ້ຖືກຕ້ອງປະຕິບັດພັນທະຄົບຖ້ວນແລ້ວໃຫ້ສືບຕໍ່ອະນຸຍາດທຳການຜະລິດພາຍໃນ ຫຼື ຖ້າສົ່ງອອກຕ້ອງໃຫ້ເສຍຄ່າສັກພິເສດ30%, ເສຍອາກອນຕາມລະບຽບກົດໝາຍລວມທັງອາກອນຂົນສົ່ງຈາກສະໜາມ1,ສະໜາມ2,ສະໜາມ3 ແລະອາກອນຂົນສົ່ງຕ່າງໆຢ່າງຄົບຖ້ວນແລະເສຍຄ່າທຳນຽມຕ່າງໆ ພ້ອມທັງເສຍ 50 $/ແມັດກ້ອນເພື່ອໃຫ້ຄະນະກຳມະການດຳເນີນການເຄື່ອນໄຫວ,ສ່ວນໄມ້ທີ່ບໍ່ຖືກຕ້ອງ 6.928 ແມັດກ້ອນໃຫ້ດຳເນີນການປັບໃໝ 100% ແລະ ເສຍພັນທະຕາມສົກປີ 2013-2014 ຖ້າຫາກຜູ້ປະກອບການບໍ່ປະຕິບັດຫຼືປະຕິບັດບໍ່ຖືກຕ້ອງແມ່ນໃຫ້ດຳເນີນການປັບໃໝແລະຍຶດໄມ້ດັ່ງກ່າວເປັນຂອງລັດແລ້ວດຳເນີນຄະດີຕາມລະບຽບກົດໝາຍ.

- ສ່ວນໄມ້ກິໂລຫຼື (ໄມ້ກຸດດຸດ) ກໍ່ໃຫ້ດຳເນີນການກວດກາແລະແຍກຄຸນນະພາບໄມ້ອອກໃຫ້ລະອຽດຈະແຈ້ງແລ້ວປະຕິບັດຕາມຄຳແນະນຳຂອງກະຊວງແລະຜົນກອງປະຊຸມຮ່ວມກັບພະແນກການກ່ຽວຂ້ອງ ( ຄຳແນະນຳຂອງທ່ານຮອງນາຍົກລັດຖະມົນຕີໃນຄັ້ງວັນທີ 19 ຕຸລາ 2014 ) .
- ສຳລັບການເຄື່ອນຍ້າຍໄມ້ພາຍໃນໄປຕ່າງແຂວງແລະນຳເຂົ້າໄມ້ຈາກຕ່າງແຂວງໃຫ້ໂຈະຊົ່ວຄາວພາຍຫຼັງກວດກາໄມ້ພາບໃນລະອຽດແລ້ວຈຶ່ງໃຫ້ປະຕິບັດ.

2).ຫ້າມພະແນກການຂອງແຂວງ,ເຈົ້າເມືອງ,ນາຍບ້ານກໍ່ຄືການຈັດຕັ້ງຂັ້ນຕ່າງໆອະນຸຍາດໃຫ້ນັກທຸລະກິດພາຍໃນຕ່າງປະເທດແລະປະຊາຊົນສຳຫຼວດ,ເກັບກູ້ທ້ອນໂຮມໄມ້,ຂຸດຄົ້ນໄມ້ ແລະ ຊື້ໄມ້ຈາກປ່າທຳມະຊາດຢ່າງເດັດຂາດ. ມອບໃຫ້ເຈົ້າໜ້າທີ່ກວດກາປ່າໄມ້ເຄື່ອນໄຫວກວດກາລາດຕະເວນຢ່າງເຂັ້ມງວດ. ຖ້າກວດກາພົບເຫັນແມ່ນໃຫ້ຍຶດເອົາໄມ້ທັງໝົດເຂົ້າເປັນຂອງລັດ ແລະດຳເນີນຄະດີຕໍ່ບຸກຄົນແລະນິຕິບຸກຄົນຢ່າງເຂັ້ມງວດ.

3).ກ່ອນການຂຸດຄົ້ນໄມ້ອອກຈາກໂຄງການກໍ່ສ້າງຕ່າງໆຕາມໂກ້ຕາປະຈຳປີຖ້າເມືອງປະຕິບັດຕາມລະບຽບກົດໝາຍປ່າໄມ້ຢ່າງເຂັ້ມງວດ,ຕ້ອງມີການເດີນສຳຫຼວດວັດແທກໝາຍຕົ້ນແລະຄິດໄລ່ບໍລິມາດຄັກແນ່ແລ້ວຈຶ່ງຂໍອະນຸຍາດຕັດໄມ້ຈາກລັດຖະບານເມື່ອໄດ້ຮັບອະນຸຍາດແລ້ວຈຶ່ງດຳເນີນຂຸດຄົ້ນ,ການຕັດໄມ້ອອກ,ສຳລັບຕັດໄມ້ອອກຈາກເຂື່ອນໄຟຟ້າບໍ່ໃຫ້ກາຍເຂດນ້ຳຖ້ວມ,ການຕັດໄມ້ອອກຈາກແລວທາງແມ່ນບໍ່ໃຫ້ກາຍເບື້ອງລະ5ແມັດ,ສ່ວນການຕັດໄມ້ອອກຈາກແລວສາຍໄຟຟ້າ,ເຂດຂຸດ